ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງຈໍາປາສັກ　　　　　　　　　　　　　　　　No No 1576

ພະແນກອຸດສາຫະກໍາ ແລະ ການຄ້າ　　　　　　　　　　ເລກທີ........../ພອຄ.ຈສ

ຄະນະກໍາມະການປະມູນໄມ້ຢຶດຂັ້ນແຂວງ　　　　　　ແຂວງຈໍາປາສັກ, ລົງວັນທີ 05-12-18

## ແຈ້ງການ

ເຖິງ: - ທ່ານປະທານສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ.

- ທ່ານປະທານສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດປະຈໍາແຂວງຈໍາປາສັກ.
- ສະມາຄົມປຸງແຕ່ງໄມ້ ແລະ ເຟີນິເຈີໄມ້ສໍາເລັດຮູບທົ່ວປະເທດ.
- ຜູ້ອໍານວຍການໂຮງງານປຸງແຕ່ງໄມ້ ແລະ ເຟີນິເຈີໄມ້ສໍາເລັດຮູບທົ່ວປະເທດ.

ເລື່ອງ: ການປະມູນຂາຍໄມ້ຢຶດຂອງລັດ ຢູ່ລະໜານ **II** ແລະ **III**.

- ອີງຕາມຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 13/05/2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນ, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມຄໍາສັ່ງແນະນໍາຂອງກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 0336/ອຄ.ກຂອ, ລົງວັນທີ 13/03/2017 ເລື່ອງ: ແນະນໍາການຈັດຕັ້ງປະມູນຂາຍໄມ້ທີ່ຢຶດເປັນຂອງລັດ.
- ອີງຕາມຂໍ້ຕົກລົງຂອງເຈົ້າແຂວງໆຈໍາປາສັກ ສະບັບເລກທີ 1407/ຈຂ.ຈສ, ລົງວັນທີ 27/12/2016 ວ່າດ້ວຍການແຕ່ງຕັ້ງຄະນະກໍາມະການຮັບຜິດຊອບປະມູນໄມ້ຢຶດຂັ້ນແຂວງ.
- ອີງຕາມບົດບັນທຶກກອງປະຊຸມຂອງຄະນະກໍາມະການປະມູນໄມ້ຂັ້ນແຂວງ ຄັ້ງວັນທີ 28 ພະຈິກ 2018.

ຄະນະກໍາມະການຮັບຜິດຊອບປະມູນໄມ້ຢຶດຂັ້ນແຂວງ(ພະແນກອຸດສາຫະກໍາ ແລະ ການຄ້າແຂວງຈໍາປາສັກ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາສະມາຊິກຂອງສະມາຄົມອຸດສາຫະກໍາປຸງແຕ່ງໄມ້ແຫ່ງຊາດ, ບັນດາສະມາຊິກຂອງສະມາຄົມອຸດສາຫະກໍາປຸງແຕ່ງໄມ້ພາຍໃນແຂວງ, ສະມາຄົມເຟີນິເຈີ, ໂຮງງານປຸງແຕ່ງໄມ້, ໂຮງງານເຟີນິເຈີ ແລະ ທຸລະກິດໄມ້ ໃນຂອບເຂດທົ່ວປະເທດ ເພື່ອເຂົ້າປະມູນຊື້-ຂາຍບ້ວງໄມ້ຢຶດ **ຈໍານວນ 84.732 ທ່ອນ/ຕົ້ນ/ເສັ້ນ, ບໍລິມາດ 1.168,551 ມກ(ໜຶ່ງພັນໜຶ່ງຮ້ອຍຫົກສິບແປດຈຸດຫ້າຮ້ອຍຫ້າສິບເອັດແມັດກ້ອນ)** ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. ໄມ້ຢຶດຢູ່ໂຮງງານປຸງແຕ່ງໄມ້ຫານຊະນະ(ອິງວິງ), ເມືອງມູນລະປະໂມກ ຊະນິດໄມ້ດູ່ ມີຈໍານວນ 1.800 ຕົ້ນ, ບໍລິມາດ: 69,621 ແມັດກ້ອນ.
2. ໄມ້ຢຶດຢູ່ໂຮງງານເຟີນິເຈີນາງຫວັນ, ເມືອງສຸຂຸມາ ຊະນິດໄມ້ດູ່ທ່ອນສັ້ນ ຈໍານວນ 1.970 ທ່ອນ, ບໍລິມາດ 41,254 ແມັດກ້ອນ.
3. ໄມ້ຢຶດຢູ່ໂຮງງານປຸງແຕ່ງໄມ້ອ່າງຄໍາ,ເມືອງໂພນທອງ ຊະນິດໄມ້ດູ່ ຈໍານວນ 899 ຕົ້ນ, ບໍລິມາດ 172,371 ມກ.
4. ໄມ້ຢຶດຢູ່ໂຮງງານເຟີນິເຈີແອພອນເທບ ເມືອງສຸຂຸມາ, ຊະນິດໄມ້ປະດູ່ ແລະໄມ້ດູ່ແປຮູບ ຈໍານວນ 29.921 ຕົ້ນ/ເສັ້ນ, ບໍລິມາດ 93,108 ແມັດກ້ອນ ໃນນັ້ນ:
    - ຊະນິດໄມ້ປະດູ່　　ຈໍານວນ　135 ຕົ້ນ, ບໍລິມາດ　3,826 ມກ
    - ຊະນິດໄມ້ດູ່ແປຮູບ　ຈໍານວນ 29.595 ເສັ້ນ, ບໍລິມາດ 61,287 ມກ
    - ຊະນິດໄມ້ດູ່　　ຈໍານວນ　191 ຕົ້ນ, ບໍລິມາດ　27,995 ມກ

5. ໄມ້ຍຶດຢູ່ໂຮງງານເຟີນີເຈີທ້າວ ໄຢ ເມືອງມູນລະປະໂມກ ຈຳນວນ 22.673 ມກ, ບໍລິມາດ 118,104 ມກ ໃນນັ້ນ: - ຊະນິດໄມ້ດູ່ ຈຳນວນ 2.633 ຕັບ, ບໍລິມາດ 65,052 ມກ
   - ຊະນິດໄມ້ດູ່ແປຮູບ ຈຳນວນ 20.040 ເສັ້ນ, ບໍລິມາດ 53,052 ມກ
6. ໄມ້ຍຶດຢູ່ໂຮງງານເຟີນີເຈີແສງຈະເລີນ ເມືອງມູນລະປະໂມກ ຊະນິດໄມ້ດູ່ ຈຳນວນ 203 ຕັບ, ບໍລິມາດ 30,273 ແມັດກ້ອນ.
7. ໄມ້ຍຶດຢູ່ໂຮງງານປຸງແຕ່ງໄມ້ຄຳແສງ ຫຼັກ 46 ເມືອງປະທຸມພອນ ຈຳນວນ 359 ຕັບ/ເສັ້ນ, ບໍລິມາດ 22,008 ມກ, ໃນນັ້ນ: - ຊະນິດໄມ້ດູ່ ຈຳນວນ 144 ຕັບ, ບໍລິມາດ 13,456 ມກ
   - ຊະນິດໄມ້ປະດົງ ຈຳນວນ 215 ຕັບ, ບໍລິມາດ 8,552 ມກ
8. ໄມ້ຍຶດຢູ່ບ້ານໂນນເອື້ອງ, ເມືອງສຸຂຸມາ ຊະນິດໄມ້ດູ່ທ່ອນສັ້ນ ຈຳນວນ 8.900 ທ່ອນ, ບໍລິມາດ 180,142 ມກ.
9. ໄມ້ຍຶດຢູ່ບ້ານໂນນຍາງ ເມືອງສຸຂຸມາ ຊະນິດໄມ້ດູ່ທ່ອນສັ້ນ ຈຳນວນ 6.000 ທ່ອນ, ບໍລິມາດ 232,810 ມກ.
10. ໄມ້ຍຶດຢູ່ສະໜາມ II ຈຸດບ້ານໜອງງາ, ບ້ານປໍ, ບ້ານເຂັມ(ກຸ່ມໜອງງາ) ເມືອງມູນລະປະໂມກ ຊະນິດໄມ້ດູ່ທ່ອນສັ້ນ ຈຳນວນ 2.411 ທ່ອນ, ບໍລິມາດ 89,963 ມກ.
11. ໄມ້ຍຶດຢູ່ສະໜາມ II ຈຸດບ້ານສະພັງ(ກຸ່ມສະພັງ), ບ້ານສະເຫຼົາໄສງ(ກຸ່ມນາດີ) ເມືອງມູນລະປະໂມກ ຊະນິດ ໄມ້ດູ່ທ່ອນສັ້ນ ຈຳນວນ 3.003 ທ່ອນ, ບໍລິມາດ 67,520 ມກ.
12. ໄມ້ຍຶດຢູ່ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ ຊະນິດໄມ້ດູ່ ຈຳນວນ 71 ຕັບ, ບໍລິມາດ 4,989 ມກ.
13. ໄມ້ຍຶດຢູ່ກອງກວດກາປ່າໄມ້ແຂວງ ຈຳນວນ 3.323 ເສັ້ນ, ບໍລິມາດ 2,232 ມກ ໃນນັ້ນ:
   - ຊະນິດໄມ້ປະດົງສິ້ນສ່ວນ ຈຳນວນ 2.166 ເສັ້ນ, ບໍລິມາດ 1,442 ມກ
   - ຊະນິດໄມ້ດູ່ສິ້ນສ່ວນ ຈຳນວນ 1.157 ເສັ້ນ, ບໍລິມາດ 0,790 ມກ.
14. ໄມ້ຍຶດຢູ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງປາກຊ່ອງ ຈຳນວນ 3.199 ທ່ອນ/ຕັບ/ເສັ້ນ/ແຜ່ນ/ຕົ່, ບໍລິມາດ 44,156 ມກ ໃນນັ້ນ:
   - ຊະນິດໄມ້ດູ່ທ່ອນສັ້ນ ຈຳນວນ 1.129 ທ່ອນ, ບໍລິມາດ 12,809 ມກ
   - ຊະນິດໄມ້ດູ່ ຈຳນວນ 1.898 ຕັບ, ບໍລິມາດ 24,598 ມກ
   - ຊະນິດໄມ້ປະດົງທ່ອນສັ້ນ ຈຳນວນ 1 ທ່ອນ, ບໍລິມາດ 0,010 ມກ
   - ຊະນິດໄມ້ແດງທ່ອນສັ້ນ ຈຳນວນ 120 ທ່ອນ, ບໍລິມາດ 4,444 ມກ
   - ຊະນິດໄມ້ຈຳປາປ່າ ຈຳນວນ 21 ເສັ້ນ, ບໍລິມາດ 0,252 ມກ
   - ຊະນິດໄມ້ບາກ ຈຳນວນ 2 ແຜ່ນ, ບໍລິມາດ 0,485 ມກ
   - ຕົ່ໄມ້ດູ່ ຈຳນວນ 28 ຕົ່, ບໍລິມາດ 1.558 ມກ

- ໃຫ້ບັນດາທ່ານເຂົ້າມາພົວພັນຊື້ຊອງປະມູນ ທີ່ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ( ຂະແໜງການຄ້າພາຍໃນ) ໃນໂມງລັດຖະການ ກຳນົດ 15 ວັນ( ນັບແຕ່ວັນທີ 05 ຫາ 18 ທັນວາ 2018 )
- ສຳລັບມື້ເປີດຊອງປະມູນ ແມ່ນວັນທີ 20 ທັນວາ 2018, ເວລາ 09:00 ໂມງ ສະຖານທີ່ຫ້ອງປະຊຸມຂອງ ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ.

- ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດເວລາ 09:30 ໂມງ ຂອງວັນທີ 20 ທັນວາ 2018 ຈຶ່ງໃຫ້ມາມອບ-ສົ່ງ ນໍາຄະນະກໍາມະການຮັບຜິດຊອບປະມູນໄມ້ຢືດ ທີ່ພະແນກອຸດສາຫະກໍາ ແລະ ການຄ້າແຂວງຈໍາປາສັກ, ຖ້າກາຍຖືວ່າສະຫຼະສິດ.
- ລາຄາຊອງປະມູນ : 1,000,000 ກີບ/ຊອງ ( ສໍາລັບຄ່າຊອງປະມູນນັ້ນແມ່ນບໍ່ສົ່ງຄືນ )

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອເຂົ້າຮ່ວມການປະມູນຊື້-ຂາຍໄມ້ ຕາມກໍານົດເວລາຂ້າງເທິງດ້ວຍ.

**ຮອງໜ້າພະແນກ**

**(ຄະນະຊີ້ນໍາກໍາມະການຮັບຜິດຊອບປະມູນໄມ້ຢືດ)**

ກະຊວງອຸດສາຫະກໍາ ແລະ ການຄ້າ
ພະແນກ
ອຸດສາຫະກໍາ ແລະ ການຄ້າ
ແຂວງ ຈໍາປາສັກ

ວິໄລສອນ ແກ້ວລາສີ

ຕິດຕໍ່ພົວພັນ:

1. ທ່ານ ທອງສຸກ ກອງແກ້ວ 020 96519 888
2. ທ່ານ ນາງ ອຸໄທທິບ ວົງຈັນທະລາ 020 55630 937
3. ທ່ານ ທັດສະນະເດືອນ ຄໍາແກ້ວ 020 95440 773
4. ທ່ານ ນາງ ວັນເພັງ ສຸລິຍາ 020 22028 886